# ທ່ານກຳລັງສະແຫວງຫາຄວາມສຸກແມ່ນບໍ່?

[ ລາວ – Laos – لاوس ]

## ຊໍແລະຫ໌ ບິນ ອັບດຸລອະຊີຊ ບິນ ອຸສມານ ສິນດີ


ແປໂດຍ : ແສງສະວາງ ຊໍແລະຫ໌

ກວດທານໂດຍ : ດອກໄມ້ອິສລາມ ແອນນີ່

ທີ່ມາ : ເວັບໄຊ www.salehs.net



2024 – 1445

IslamHouse.com

# هل تبحث عن السعادة ؟

« باللغة اللاووسية »

صالح بن عبد العزيز بن عثمان سندي

ترجمة: نور صالح

مراجعة: أبو مالك بن صالح

المصدر: الموقع الرسمي للشيخ صالح سندي

2024 – 1445

IslamHouse.com

ດ້ວຍພຣະນາມຂອງອັລລໍຫ໌ ຜູ້ຊົງເມດຕາ ປານີຢ່າງສະເໝີ

# ທ່ານກຳລັງສະແຫວງຫາຄວາມສຸກແມ່ນບໍ່?

ຄວາມສຸກແມ່ນຈຸດໝາຍທີ່ທຸກຊີວິດເທິງໜ້າແຜ່ນດິນນີ້ສະແຫວງຫາເພື່ອໃຫ້ໄດ້ຮັບມັນມາ.

ເຊິ່ງແນ່ນອນມະນຸດທຸກຄົນບໍ່ວ່າຈະເປັນຜູ້ຮູ້ຫຼືຄົນຈ້າໂງ່ກໍຕາມ,ຕ່າງເສາະສະແຫວງຫາສາເຫດແຫ່ງຄວາມສຸກ,ພວກເຂົາຍອມທຸ່ມເທກຳລັງຢ່າງອິດເມື່ອຍ ໃນການຄົ້ນຫາສິ່ງຕ່າງໆເພື່ອກຳຈັດຄວາມຂັດສົນ ຄວາມເຈັບປວດ ແລະ ຄວາມທຸກຍາກ.

ທະວ່າ ຄວາມເປັນຈິງແລ້ວການແກ້ປັນຫາຂອງພວກເຂົາເຫຼົ່ານັ້ນຫາແມ່ນສິ່ງທີ່ຖືກຕ້ອງແທ້ຈິງບໍ່, ສິ່ງທີ່ພວກເຂົາໝາຍເຖິງແມ່ນຄວາມສຸກທີ່ໄດ້ຮັບຈາກ,ການລະຫຼິ້ນ,ຄວາມເພີດເພີນ ຫຼື ສິ່ງອື່ນໆ ພວກເຂົາອາດຈະໄດ້ຮັບຈາກມັນແຕ່ມັນເປັນພຽງຄວາມສຸກຊົ່ວຄາວ, ຫຼັງຈາກນັ້ນບໍ່ດົນ ພວກເຂົາກໍຈະຕື່ນຂຶ້ນມາພ້ອມໆກັບບາງສິ່ງບາງຢ່າງພາຍໃນທີ່ສ້າງຄວາມຂຸ່ນມົວແກ່ຊີວິດທີ່ສົດໃສຂອງພວກເຂົາ.

ໜັງສືເຫຼັ້ມນ້ອຍໆທີ່ຢູ່ໃນມືຂອງທ່ານຂະນະນີ້ອາດຈະເປີດປະຕູໃຫ້ທ່ານພົບກັບຄວາມສຸກທີ່ແທ້ຈິງ ແລະ ອາດຈະເປັນໂຕຊັກຈູງທ່ານສູ່ຄວາມຜ່ອນຄາຍທາງຈິດວິນຍານ ແລະ ຄວາມສະຫງົບສຸຂຸມທີ່ສົມບູນກໍເປັນໄດ້.

ກ່ອນທີ່ທ່ານຈະອ່ານມັນ ຂ້າພະເຈົ້າຂໍໃຫ້ທ່ານມີຄວາມຕັ້ງໃຈ ແລະ ພະຍາຍາມເປີດສະຕິປັນຍາ,ເປີດຫົວໃຈ ເພາະຜູ້ມີສະຕິປັນຍາແມ່ນຜູ້ທີ່ສະແຫວງຫາສັດຈະທໍາ ບໍ່ວ່າໃຜຊິເປັນຜູ້ກ່າວມັນກໍຕາມ.

ແທ້ຈິງ ສັດຈະທໍາຂໍ້ໜຶ່ງທີ່ບໍ່ມີຜູ້ໃດອາດຈະປະຕິເສດມັນໄດ້. ຖ້າຄົນໆນັ້ນປາສະຈາກອາລົມໃຝ່ຕໍ່າກໍແມ່ນຄວາມສຸກທີ່ໝັ້ນຄົງຈະບໍ່ເກີດຂຶ້ນເວັ້ນເເຕ່ດ້ວຍກັບການສັດທາຕໍ່ອັລເລາະຫ໌ພຣະເຈົ້າຜູ້ຊົງສ້າງ ແລະ ເນລະມິດສິ່ງທັງຫຼາຍ. ແລະດ້ວຍການປະຕິບັດຕາມແນວທາງຂອງພຣະອົງ ເພາະອັລເລາະຫ໌ແມ່ນຜູ້ສ້າງມະນຸດ ແລະ ແນ່ນອນພຣະອົງຄືຜູ້ຮູ້ດີຍິ່ງວ່າສິ່ງໃດທີ່ມອບຄວາມສຸກແກ່ມະນຸດ ແລະ ສິ່ງໃດທີ່ທໍາໃຫ້ເກີດທຸກ, ສິ່ງໃດທີ່ໃຫ້ເຈົ້າ ແລະ ສິ່ງໃດທີ່ໃຫ້ໂທດ.

ມີນັກຈິດວິທະຍາຈຳນວນບໍ່ໜ້ອຍໄດ້ໃຫ້ການຢັ້ງຢືນວ່າມະນຸດຜູ້ທີ່ມີສາສະໜາແມ່ນບຸກຄົນປະເພດດຽວເທົ່ານັ້ນທີ່ສາມາດໃຊ້ຊີວິດຢ່າງມີຄວາມສຸກ ແລະ ສະຫງົບໃຈ.

ເມື່ອການສັດທາຕໍ່ອັລເລາະຫ໌ແມ່ນທີ່ເຊື່ອງແຫ່ງຄວາມສຸກທີ່ໝັ້ນຄົງ ແລ້ວແມ່ນຫຍັງລ່ະແມ່ນແນວທາງທີ່ຈະນຳໄປສູ່ຄວາມສັດທາທີ່ວ່ານັ້ນ?

ມີສາສະໜາ ແລະ ຄວາມເຊື່ອຕ່າງໆຫຼາກຫຼາຍເທິງໂລກໜ່ວຍນີ້, ຜູ້ສັງເກດຈະເຫັນໄດ້ວ່າຄວາມແຕກຕ່າງສາສະໜາອັນຫຼາກຫຼາຍນັ້ນຢ່າງສິ້ນເຊີງໃນລະດັບຮາກຖານດຽວກັນຈຶ່ງເປັນໄປບໍ່ໄດ້ວ່າທຸກສາສະໜາທັງໝົດຈະເປັນສັດຈະທຳທີ່ຖືກຕ້ອງທັງສິ້ນ.

ດັ່ງນັ້ນ ແມ່ນຫຍັງລ່ະຄືສາສະໜາທີ່ແທ້ຈິງ?

ແລະ ແມ່ນຫຍັງລ່ະແມ່ນຄວາມເຊື່ອທີ່ອັລເລາະຫ໌ຮັກ ແລະ ມັກໃຫ້ເຮົາສັດທາ?

ແລະ ແມ່ນຫຍັງລ່ະຄືສາສະໜາທີ່ປະກັນຄວາມສຸກໃຫ້ກັບເຮົາໄດ້ທັງໂລກນີ້ ແລະ ໂລກໜ້າ?

ກ່ອນທີ່ຈະມີການຕອບຄໍາຖາມຕ່າງໆເຫຼົ່ານີ້ຈໍາເປັນທີ່ຈະຕ້ອງປູພື້ນຖານທີ່ຖືກຕ້ອງສາກ່ອນ, ເພື່ອດໍາເນີນຕໍ່ການເລືອກເຟັ້ນສິ່ງທີ່ຖືກຕ້ອງສູ່ສາສະໜາທີ່ແທ້ຈິງ. ເພາະຂ້າພະເຈົ້າໝັ້ນໃຈຢ່າງແນ່ນອນວ່າຜູ້ທີ່ມີສະຕິປັນຍາທຸກຄົນຍ່ອມເຫັນດີວ່າ ການທີ່ມະນຸດແຕ່ລະບຸກຄົນເຕີບໃຫຍ່ມາເທິງສາສະໜາໃດໜຶ່ງທີ່ລິດາ, ມານດາ ແລະ ສັງຄົມອ້ອມຂ້າງນັບຖືມັນຢູ່, ບໍ່ແມ່ນຫຼັກຖານທີ່ຈະບອກວ່າສາສະໜາທີ່ເຂົາສັດທາຢູ່ນັ້ນເປັນສິ່ງທີ່ທ່ຽງແທ້, ຕາບໃດທີ່ຍັງບໍ່ມີຂໍ້ບົ່ງຊີ້ຫຼືຫຼັກຖານທີ່ຮັບໄດ້ຢ່າງຊັດເຈນຕໍ່ສິ່ງດັ່ງກ່າວ ແລະ ຕາບໃດທີ່ສະຕິປັນຍາຍັງບໍ່ບັນລຸເຖິງຄວາມສະບາຍໃຈ ແລະ ຄວາມໝັ້ນໃຈຢ່າງຊັດເຈນຕໍ່ສິ່ງນັ້ນໆ.

ຖ້າຫາກສະຕິປັນຍາແມ່ນສິ່ງຈໍາແນກລະຫວ່າງມະນຸດກັບສັດ,ດັ່ງນັ້ນຜູ້ທີ່ມີສະຕິປັນຍາ ກໍຈົ່ງໃຊ້ມັນພິຈາລະນາເຖິງປະເດັນນັ້ນ.ເພາະມັນແມ່ນປະເດັນທີ່ສໍາຄັນແລະ ອັນຕະລາຍຍິ່ງ.

ການເດີນທາງອັນສັ້ນໃນການທ່ອງສໍາຫຼວດຄວາມເຊື່ອຂອງສາສະໜາຕ່າງໆທີ່ຫຼາກຫຼາຍນີ້, ອາດເປັນສີ່ທີ່ດີທີ່ສຸດໃນການຫາຄໍາຕອບທີ່ເຈົ້າກໍາລັງສະແຫວງຫາຢູ່.

ຂ້າພະເຈົ້າຈະສະຫຼຸບໃຫ້ທ່ານຢ່າງສັ້ນໆ ແລະ ໄດ້ໃຈຄວາມດ້ວຍຄວາມເຊື່ອໝັ້ນ ແລະ ຄວາມຈິງຢ່າງບໍລິສຸດວ່າ: ບໍ່ວ່າທ່ານຈະສະແຫວງຫາສັດຈະທຳບ່ອນໃດກໍຕາມທ່ານຈະບໍ່ມີວັນພົບເຈີສິ່ງອື່ນໃດຢ່າງເດັດຂາດເວັ້ນແຕ່ສັດຈະທຳອັນໜຶ່ງດຽວເທົ່ານັ້ນ ນັ້ນແມ່ນສາສະໜາ.

ອິດສະລາມທີ່ແທ້ຈິງນັ້ນເອງ ແລະ ຄວາມສຸກທີ່ແທ້ຈິງນັ້ນ,ມັນຢູ່ໃນອິດສະລາມນີ້ເອງ.

ກະລຸນາຢ່າຮີບຮ້ອນໃນການໂຕ້ຕອບຄຳເວົ້າຂອງຂ້າພະເຈົ້າ ແລະ ຕັດບົດການນຳສະເໜີໂດຍບໍ່ທັນໃຫ້ຂ້າພະເຈົ້າເວົ້າຈົບ,ສັງເກດໄດ້ວ່າການທີ່ຂ້າພະເຈົ້ານຳສະເໜີມັນຈົບສົມບູນແລ້ວກໍບໍ່ໄດ້ສ້າງຄວາມເດືອດຮ້ອນໃດໆຈາກມັນກໍເປັນໄດ້.

ບໍ່ວ່າຈະຢ່າງໃດ,ທ່ານກໍແມ່ນວິນລະຊົນຜູ້ມີສະຕິປັນຍາ, ທີ່ສາມາດແຍກແຍະສິ່ງຕ່າງໆ ແລະ ຮັບຮູ້ສິ່ງທີ່ຖືກຕ້ອງຈາກສິ່ງທີ່ຜິດໄດ້ຢູ່ແລ້ວ.

## ເປັນຫຍັງອິດສະລາມ ແມ່ນ ສາສະໜາທີ່ແທ້ຈິງ?

ເປັນຄຳຖາມທີ່ຜູ້ອ່ານອາດຕັ້ງຄຳຖາມຂຶ້ນມາ ເຊິ່ງເປັນຄຳຖາມທີ່ດີຫຼາຍເເຮງ, ບົ່ງບອກວ່າຜູ້ຕັ້ງຄຳຖາມນັ້ນເປັນຜູ້ທີ່ມີສະຕິປັນຍາຢ່າງສະຫຼຽວສະຫຼາດ ແລະ ປາດເປື່ອງຢ່າງເດັ່ນຊັດ.

ຄຳຕອບສຳລັບຄຳຖາມນີ້ ຂ້າພະເຈົ້າຂໍກ່າວວ່າ: ສາສະໜາອິດສະລາມແມ່ນສາສະໜາທີ່ລວມເຊິ່ງລັກສະນະຕ່າງໆທີ່ດີແລະມີຈຸດເດັ່ນບາງປະການທີ່ເປັນເລີດ,ເຊິ່ງສິ່ງເຫຼົ່ານີ້ບໍ່ມີປາກົດຢູ່ໃນສາສະໜາໃດເລີຍນອກຈາກອິດສະລາມມັນແມ່ນຫຼັກຖານເປັນຂໍ້ບົ່ງຊີ້ວ່າອິດສະລາມເປັນສາສະໜາທີ່ມາຈາກພຣະຜູ້ເປັນເຈົ້າ, ເຊິ່ງສາມາດພິສູດໄດ້ວ່າຖືກຫຼືຜິດແນວໃດດ້ວຍການພິຈາລະນາເນື້ອຫາຂອງມັນລຶກຊຶ້ງແລະໃຈເຢັນ.

ລັກສະນະຈຸດເດັ່ນຂອງອິດສະລາມນັ້ນມີຫຼາກຫຼາຍ, ຍາກທີ່ຈະນຳສະເໜີເປັນຄຳເວົ້າທີ່ຈຳກັດນີ້ໄດ້ ແລະ ຂ້າພະເຈົ້າຈະຂໍນຳສະເໜີຢ່າງຜ່ານໆ ແລະ ພໍສັງເຂບດັ່ງຕໍ່ໄປນີ້:

1.ສ່ວນໜຶ່ງຈາກຈຸດເດັ່ນທີ່ສຳຄັນຂອງອິດສະລາມກໍແມ່ນມັນເປັນສິ່ງທີ່ເຕີມຄວາມເອີອບອີ່ມທາງດ້ານຈິດວິນຍານໃຫ້ກັບມະນຸດເຮັດໃຫ້ຜູ້ສັດທາເປັນຜູ້ທີ່ມີຄວາມຜູກພັນກັບພຣະ

ຜູ້ເປັນເຈົ້າຢ່າງຕໍ່ເນື່ອງ,ເປັນຜົນເຮັດໃຫ້ໄດ້ຮັບຄວາມສຸຂຸມ ,ເຢືອກເຢັນ ແລະ ຄວາມສຸກດ້ານຈິດໃຈ, ເປັນການປົກປ້ອງ ຈາກການເລີຍເຖີດ,ຟຸ້ງຊ່ານ ແລະ ຄວາມແປປ່ວນທາງຈິດໃຈ.

2.ອິດສະລາມເປັນສິ່ງທີ່ສອດຄ່ອງກັບສະຕິປັນຍາຢ່າງ ສົມບູນແບບ,ເຊິ່ງທຸກບັນຍັດຂອງອິດສະລາມເປັນສິ່ງທີ່ ສອດຄ່ອງກັບສະຕິປັນຍາບໍ່ມີທາງທີ່ຈະຂັດກັນໂດຍເດັດຂາດ ເນື່ອງຈາກເຫດນີ້ເອງ; ເມື່ອມີບຸກຄົນໜຶ່ງເຂົ້ານັບຖືອິດສະລາມ ມັນຖືກຖາມວ່າ:ເປັນຫຍັງເຈົ້າຈຶ່ງເຂົ້າຮັບອິດສະລາມ? ເຂົາຈະ ຕອບວ່າ:”ບໍ່ມີສິ່ງໃດກໍຕາມທີ່ອິດສະລາມໄດ້ສັ່ງໃຊ້ ແລ້ວສະຕິ ປັນຍາຈະຄ້ານກັບອິດສະລາມວ່າບໍ່ໜ້າຈະສັ່ງໃຊ້ຂໍ້ນີ້ເລີຍ ແລະ ບໍ່ມີຂໍ້ຫ້າມໃດທີ່ອິດສະລາມຫ້າມ ແລ້ວສະຕິປັນຍາຈະ ຄ້ານກັບອິດສະລາມວ່າ ບໍ່ໜ້າຈະຫ້າມສິ່ງນີ້ເລີຍ.

ຖ້າຫາກວ່າມີສາສະໜາຫຼາກຫຼາຍທີ່ມີອຸດົມການ ພື້ນຖານທີ່ຄົນສ່ວນໃຫຍ່ຍາກທີ່ຈະຮັບໄດ້. ສະຕິປັນຍາອາດຈະ ຢືນຢູ່ຕໍ່ໜ້າຄວາມເຊື່ອຫຼັກທີ່ແຍ້ງບໍ່ໄດ້ໃນສາສະໜານັ້ນໆ ແຕ່ ໃນອິດສະລາມ ເຮົາກັບພົບວ່າອິດສະລາມໃຫ້ກຽດສະຕິປັນຍາ, ອິດສະລາມສັ່ງໃຫ້ເຮົາໃຊ້ຄວາມຄິດ,ອິດສະລາມປະຕິເສດ ຄວາມຈ້າໂງ່ເບົາປັນຍາ ແລະ ຫ້າມການຕາມຢ່າງຕາບອດ.

3.ອິດສະລາມຜະສົມຜະສານລະຫວ່າງສາສະໜາ ແລະ ທາງໂລກໄດ້ຢ່າງລົງຕົວ,ໃຫ້ຄວາມສຳຄັນທັງໃນດ້ານຈິດວິນຍານ ແລະ ຮ່າງກາຍການຮັບອິດສະລາມບໍ່ໄດ້ໝາຍຄວາມວ່າຕ້ອງຍຶດຕິດຮູບລັກໃດໆເປັນການສະເພາະ ຫຼື ຕ້ອງງົດຄວາມສະດວກສະບາຍໃນການດຳລົງຊີວິດ.

ທະວ່າໃນອິດສະລາມນັ້ນ,ບຸກຄົນຫນຶ່ງອາດຈະເປັນຜູ້ຍຶດໝັ້ນໃນຫຼັກສາສະໜາ, ແຕ່ເຂົາກໍສາມາດໃຊ້ຊີວິດຢ່າງປົກກະຕິທົ່ວໄປຢ່າງດີເລີຍ, ເຂົາອາດຈະເປັນຜູ້ສາມາດເຂົ້າເຖິງຕຳແໜ່ງ ແລະ ຮັບກຽດຕິຄຸນທີ່ສູງສຸດໃນສັງຄົມກໍເປັນໄດ້.

4.ໃນຈຳນວນຈຸດເດັ່ນຂອງອິດສະລາມກໍແມ່ນເປັນສາສະໜາທີ່ຄວບຄຸມ ບໍ່ວ່າດ້ານໃດຂອງຊີວິດ, ເຮົາຈະພົບວ່າມີລະບົບການຈັດການດ້ານນັ້ນໆຢູ່ໃນອິດສະລາມ, ບໍ່ວ່າຈະປັນຫາຫຍັງກໍຕາມແຕ່ອິດສະລາມກໍມີຄຳຕອບໃຫ້. ດ້ວຍເຫດນີ້ເອງອິດສະລາມຈຶ່ງເປັນສາສະໜາທີ່ເໝາະສຳລັບຍຶດປະຕິບັດໃນທຸກການທຸກສະໄໝ ແລະ ທຸກທີ່ມັນຈະບໍ່ເປັນແບບນັ້ນໄດ້ແນວໃດ ກໍໃນເມື່ອອິດສະລາມໄດ້ຈັດລະບຽບ ແລະ ວາງຫຼັກພື້ນຖານ,ຫຼັກການທີ່ເໝາະສົມໄວ້ໃນທຸກໆດ້ານ,ເລີ່ມຈາກລະບົບການປົກຄອງ ແລະ ແນວທາງການແກ້ໄຂຂໍ້ຂັດແຍ່ງ, ຕາມດ້ວຍລະບົບການຄ້າ,ຫຸ້ນສ່ວນ ແລະ ຫຼັກການປະຕິບັດ

ລະຫວ່າງການ, ຕໍ່ດ້ວຍການວາງລະບົບຄວາມສຳພັນໃນສັງຄົມ,ການໃຊ້ຊີວິດຮ່ວມກັນໃນຄອບຄົວ ແລະ ປິດທ້າຍດ້ວຍກັນເຄົາລົບ,ຈັນຍາ,ມາລະຍາດຕາມທ້ອງຖະໜົນ ແລະ ການຈັດລະບຽບຂອງມະນຸດທຸກໆດ້ານບໍ່ວ່າຈະເປັນການນອນ,ການຮັບປະທານ,ການດື່ມ,ການສວມໃສ່ ແລະ ອີກຫຼາກຫຼາຍ...

ສິ່ງດັ່ງກ່າວນີ້ບໍ່ໄດ້ເປັນແບບລອກໆ,ລວມໆ, ແຕ່ຖືກຈັດໄວ້ດ້ວຍລາຍລະອຽດປີກຍ່ອຍທີ່ປານີຍິ່ງ, ຈົນສະຕິປັນຍາຕ້ອງອີ້ງກັບມັນ, ທ່ານຄວນຮັບຊາບວ່າວ່າ: ອິດສະລາມໃຫ້ແບບຢ່າງແກ່ມະນຸດ ຈົນເຖິງຂັ້ນວິທີການສວມໃສ່ ແລະ ການປົດເກີບ ແລະ ສົ່ງເສີມໃຫ້ໃຊ້ມືຂວາເພື່ອຮັບປະທານອາຫານ, ການດື່ມ,ການຈັບມື,ການຈັບສິ່ງຂອງ,ການໃຫ້ ແລະ ອີກຫຼາກຫຼາຍ. ສ່ວນເລື່ອງທີ່ໜ້າກຽດສຸດເຊັ່ນ ການຊຳລະສິ່ງສົກກະປົກກໍໃຫ້ມືຊ້າຍແທນມືຂວາເປັນຕົ້ນ.

ເມື່ອເຖິງເວລາຫຼັບນອນ ອິດສະລາມກໍສອນວິທີການນອນ ແລະ ຫຼັງການຕື່ນນອນຢ່າງຊັດເຈນ.

ແລະ ເມື່ອມຸດສະລິມສອງຄົນພົບປະກັນໃນຖະໜົນຫົນທາງ ອິດສະລາມກໍໄດ້ຈັດຮູບແບບການທັກທາຍລະຫວ່າງເຂົາທັງສອງ,ຜູ້ທີ່ຂັບຂີ່ສົມຄວນເປັນຜູ້ເລີ່ມໃຫ້ສະລາມທັກທາຍ

ແກ່ຜູ້ທີ່ຍ່າງ,ເດັກນ້ອຍໃຫ້ສະລາມທັກທາຍແກ່ຜູ້ເຖົ້າອາວຸໂສ, ຄົນສ່ວນນ້ອຍກໍໃຫ້ສະລາມທັກທາຍແກ່ກຸ່ມຄົນທີ່ຫຼາຍກວ່າ.

ແລະ ນີ້ເປັນພຽງຕົວຢ່າງເລັກນ້ອຍຈາກບັນຍັດອິດສະລາມທີ່ຄວບຄຸມ ແລະ ກໍາເນີດລະບຽບໃນທຸກໆດ້ານຂອງຊີວິດ.

5.ສ່ວນໜຶ່ງຈາກຄວາມໂດດເດັ່ນ ແລະ ພິເສດຂອງອິດສະລາມເເມ່ນທຸກໆຂໍ້ບັນຍັດຂອງອິດສະລາມຄືການນໍາມາເຊິ່ງສິ່ງທີ່ດີງາມ,ສິ່ງທີ່ເປັນປະໂຫຍດ ແລະ ກໍາຈັດສິ່ງທີ່ບໍ່ດີອອກ. ດັ່ງນັ້ນ,ບັນຍັດຕ່າງໆຂອງອິດສະລາມຈະນໍາປະໂຫຍດກັບໄປສູ່ຕົວມະນຸດເອງ ແລະ ແກ່ສັງຄົມຂອງເຂົາດ້ວຍ.

ເຊັ່ນອິດສະລາມໄດ້ຫ້າມການດື່ມສິ່ງທີ່ມຶນເມົາ ແລະ ສິ່ງເສບຕິດທັງຫຼາຍ,ເນື່ອງດ້ວຍມັນທັງສອງມີໂທດອັນຕະລາຍຕໍ່ສະຕິປັນຍາ,ຕໍ່ສຸຂະພາບ,ເຊິ່ງທ່ານຈະເຫັນສະພາບທີ່ມຶນເມົາໄດ້ວ່າເປັນສະພາບທີ່ໃກ້ຄຽງກັບສັດຫຼືສິ່ງອື່ນທີ່ບໍ່ແມ່ນມະນຸດຫຼາຍກວ່າຈະເປັນສະພາບຂອງມະນຸດຜູ້ມີປັນຍາດ້ວຍຊໍ້າເປັນຕົ້ນ.

ອາຊະຍາກໍາ,ການຜິດຖຽງຕີກັນ,ອຸປະຕິເຫດທາງຍານພາຫະນະຫຼືການຂົ່ມຂືນກະທໍາຊໍາເລົາ,ອັນຫຼາກຫຼາຍທີ່ເຮົາເຫັນຄືງບໍ່ເກີດຂຶ້ນ,ຖ້າຫາກວ່າບໍ່ມີການເສບສິ່ງຕ່າງໆທີ່ເຮັດໃຫ້ເສຍສະຕິເຊັ່ນຂອງພວກນີ້.

ແລະ ເມື່ອອິດສະລາມຫ້າມມີເພດສຳພັນທາງເພດນອກເໜືອຈາກການແຕ່ງງານ,ເພື່ອຈະໃຫ້ມະນຸດໄດ້ຫ່າງໄກຈາກພະຍາດທີ່ອັນຕະລາຍອາທິເຊັ່ນ: ເອດ,ໜອງໃນ ຫຼື ພະຍາດທາງເພດອື່ນໆ ແລະ ເພື່ອທີ່ໃຫ້ສັງຄົມໄດ້ຫ່າງໄກຈາກສະພາບທີ່ເສື່ອມທາມຫຼືສີລະທຳ ແລະ ບໍ່ໃຫ້ອານຸຊົນຮຸ່ນໃຫມ່ກາຍເປັນສັງຄົມເດັກຖືກຖິ້ມ,ຂາດຄວາມອົບອຸ່ນຈາກແມ່, ຂາດການດູແລຈາກພໍ່,ສຸດທ້າຍກໍກາຍເປັນພາລະຂອງສັງຄົມ ແລະ ເປັນຫາຍະນະຂອງສັງຄົມນັ້ນເອງ.

ແລະ ເມື່ອອິດສະລາມໄດ້ສັ່ງໃຊ້ໃຫ້ຜູ້ຍິງປົກປິດຮ່າງກາຍຢ່າງມິດຊິດ,ທ່ານກາງຝູງຊົນ ແລະ ຊາຍແປກໜ້າ, ເພາະອິດສະລາມເຫັນວ່າແມ່ຍິງແມ່ນອັນຍະມະນີອັນລ້ຳຄ່າທີ່ຕ້ອງຫວງແຫນ ແລະ ເກັບຮັກສາໃຫ້ດີພວກເຂົາບໍ່ແມ່ນສິນຄ້າລາຄາຖືກທີ່ຖືກສະເໜີຢູ່ຕາມຖະໜົນຫົນທາງຕໍ່ໜ້າຜູ້ຄົນ ແລະ ເພື່ອເປັນການປົກປ້ອງພວກເຂົາຈາກຜູ້ລາມົກທີ່ມີນິໄສຄືໝາຈິ້ງຈອກທີ່ບໍ່ມີສິ່ງໃດສຳຄັນຕໍ່ພວກເຂົາເວັ້ນແຕ່ສະໜອງຕໍ່ອາລົມຕັນຫາອັນຊົ່ວຮ້າຍ,ໂດຍບໍ່ສົນໃຈຕໍ່ກຽດຄຸນຄ່າ ແລະ ຄວາມບໍລິສຸດຂອງພວກນາງເລີຍ.

ໃນກົງກັນຂ້າມອິດສະລາມໄດ້ອະນຸຍາດເຄື່ອງດື່ມທຸກຊະນິດທີ່ມີປະໂຫຍດປາສະຈາກໂທດ,ດັ່ງເຊັ່ນໄດ້ອະນຸຍາດ

ຄວາມສຳພັນລະຫວ່າງຊາຍຍິງຫຼັງແຕ່ງງານພາຍໃຕ້ຮົ່ມເງົາແຫ່ງຄອບຄົວທີ່ເປື່ອຍສຸກ.

ຂໍ້ສະຫລຸບກໍແມ່ນ ອິດສະລາມບໍ່ໄດ້ມາເພື່ອປິດກັ້ນອິດສະຫຼະ ແລະ ຄວາມຕ້ອງການທຸກຢ່າງໂດຍສິ້ນເຊີງ,ແຕ່ທະວ່າອິດສະລາມມາເພື່ອວາງ ແລະ ຕັ້ງກົດລະບຽບໃນທຸກສິ່ງທີ່ເກີດປະໂຫຍດແກ່ມະນຸດ,ແກ່ສັງຄົມ ແລະ ໂລກທັງຜອງ.

6.ຄວາມພິເສດອີກດ້ານໜຶ່ງທີ່ໂດດເດັ່ນໃນອິດສະລາມນັ້ນແມ່ນການເອົາໃຈໃສ່ເລື່ອງຄຸນຄ່າ,ຄຸນລັກສະນະນິໄສ ແລະ ຈັນຍາມາລະຍາດ ແລະ ໄດ້ຫ້າມປາກົດການອາລະຍະທຳ,ການລະເມີດສິດ ແລະ ນິໄສບໍ່ດີທຸກປະການ.

ອິດສະລາມເປັນສາສະໜາແຫ່ງຄວາມຮັກ,ການຢູ່ຮ່ວມກັນ ແລະ ເມດຕາກັນ,ອິດສະລາມໄດ້ວາງລະບົບຄວາມສຳພັນຂອງມະນຸດຕໍ່ບິດາມານດາ,ຍາດຕິພີ່ນ້ອງ,ເພື່ອນບ້ານ,ມິດສະຫາຍ ແລະ ຝູງຊົນ, ໄດ້ປູກຝັງນິໄສທີ່ໜ້າຊື່ນຊົມ ແລະ ຈັນຍາມາລະຍາດທີ່ດີງາມທີ່ສຸດໃນໂຕຜູ້ສັດທາທຸກຄົນ.

ອິດສະລາມໄດ້ຫ້າມມະນຸດໃຊ້ຊີວິດເພື່ອໂຕເອງພຽງຄົນດຽວອິດສະລາມໄດ້ອົບຮົມສັ່ງສອນໃຫ້ມະນຸດຮູ້ຈັກຊ່ວຍເຫຼືອຜູ້ອື່ນ, ເຫັນໃຈຄວາມຮູ້ສຶກເພື່ອນມະນຸດ,ດັ່ງນັ້ນ,ຄົນ

ຍາກຈົນ,ເດັກກຳພ້າ,ຜູ້ສູງອາຍຸ ແລະ ແມ່ໝ້າຍ ໃນອິດສະລາມພວກເຂົາເຫຼົ່ານີ້ລ້ວນມີສິດທີ່ມຸສລິມຈະຕ້ອງເບິ່ງແຍງ, ຕ້ອງຖືເປັນເລື່ອງຫຼັກ ແລະ ຈະຕ້ອງບໍ່ເຫັນເປັນເລື່ອງຮອງທີ່ບໍ່ສຳຄັນປານໃດ ແລະ ຈະຕ້ອງບໍ່ຊ່ວຍເຫລືອເພື່ອຫວັງຈະລຳລຶກບຸນຄຸນຫຼືດູຖູກດູແຄນພວກເຂົາ, ແຕ່ທະວ່າ ຕ້ອງເຮັດໄປດ້ວຍຄວາມຕະໜັກວ່າມັນເປັນໜ້າທີ່ທີ່ຈະຕ້ອງປະຕິບັດ ແລະ ພາລະກິດຈຳເປັນຂອງເຂົາເລີຍທີດຽວ.

ໃນອິດສະລາມຖືເປັນບາບໃຫຍ່ສຳລັບໃຜຄົນໜຶ່ງທີ່ນອນຫຼັບໃນສະພາບທີ່ອີ່ມ ແລະ ຮູ້ວ່າເພື່ອບ້ານຂອງເຂົາກຳລັງຢູ່ໃນສະພາບຫິວໂຊ ແລະ ເຊັ່ນກັນອິດສະລາມໄດ້ຫ້າມບຸກຄົນສອງຄົນກະຊິບລົມກັນໃນຂະນະທີ່ບຸກຄົນທີ່ສາມຮ່ວມວົງຢູ່ນຳ,ເພື່ອເປັນການຖະໜອມ ແລະ ເບິ່ງແຍງຄວາມຮູ້ສຶກຕໍ່ກັນ.

ອິດສະລາມໄດ້ກ້າວໜ້າໄປຫຼາຍກວ່າທີ່ກ່າວມາດ້ວຍຊ້ຳ,ເພາະອິດສະລາມໄດ້ສັ່ງໃຫ້ເຮົາມີຄວາມເມດຕາຈົນເຖິງຂັ້ນຕໍ່ສັດ ແລະ ຫ້າມທຳຮ້າຍມັນອີກດ້ວຍ.

ຕົວຢ່າງໜຶ່ງທີ່ສະແດງເຖິງຄວາມລະອຽດຂອງອິດສະລາມໃນເລື່ອງນີ້ກໍແມ່ນອິດສະລາມໄດ້ຫ້າມການເຊືອດສັດໂຕ

ໃດຕໍ່ໜ້າໂຕອື່ນ,ຫ້າມບໍ່ໃຫ້ຜິນມີດຕໍ່ໜ້າສັດທີ່ຈະເຊືອດ, ລວມເຖິງຫ້າມເຊືອດສັດບໍ່ຕາຍໃນຄັ້ງດຽວ.

ແທ້ຈິງການມີສັດຈະ,ມີຄວາມຮັບຜິດຊອບ,ມີຄວາມກ້າຫານ,ມີຄວາມເມດຕາ,ມີຄວາມລະອາຍ,ການຮັກສາສັນຍາ,ເປັນມາລະຍາດທີ່ອິດສະລາມໄດ້ສົ່ງເສີມຢ່າງຫຍິ່ງ ແລະ ເຊັ່ນດຽວກັບການຢັ້ງມຢາມຜູ້ປ່ວຍ,ການເດີນສົ່ງສົບຜູ້ຕາຍ,ການເຮັດດີຕໍ່ພໍ່ແມ່,ການຢັ້ງມຢາມຍາດຕິພີ່ນ້ອງ,ເພື່ອນບ້ານ,ຊ່ວຍເຫຼືອຜູ້ອື່ນ,ລ້ວນເປັນມາລະຍາດທີ່ອິດສະລາມສົ່ງເສີມ ແລະ ສັ່ງໃຊ້ທັງສິ້ນ.

ໃນທາງກັບວ່າອິດສະລາມໄດ້ຫ້າມມຸສລິມຢ່າງເດັດຂາດຈາກການອາທໍາ,ການຂີ້ຕົວະ,ການຫຍິ່ງຍະໂສ,ການອິດສາ,ການລໍ້ຮຽນແບບຜູ້ອື່ນຫຼືຕໍາວ່າ ແລະ ບິດເບືອນເປັນຕົ້ນ.

ໃນອິດສະລາມບໍ່ອະນຸຍາດໃຫ້ກ່າວເຖິງບຸກຄົນທີ່ສາມໃນທາງທີ່ບໍ່ດີເຖິງວ່າຈະເປັນຄວາມຈິງກໍຕາມ ແລະ ຍັງໄດ້ຮຽກຮ້ອງສູ່ການໃຊ້ຈ່າຍທີ່ພໍດີລະຫວ່າງ,ການບໍ່ສິ້ນເປືອງຈົນເກີນເຫດ ແລະ ການບໍ່ຄິດໃຫ້ຖີ່ຖ້ວນ.

ແທ້ຈິງແລ້ວ ໃນຍຸກທີ່ສັງຄົມຫຼາກຫຼາຍກຳລັງປະສົບກັບບັນຫາຄວາມແຂງກະດ້າງຂອງຈິດໃຈ,ນິຍົມວັດຖຸຢ່າງເກີນຂອບເຂດ,ເຫັນແກ່ໂຕຈົນເລີຍເຖິດ,ເຮົາກັບພົບວ່າອິດສະລາມມີທາງອອກໃນການແກ້ບັນຫາເຫຼົ່ານີ້ເອົາໄວ້ຢ່າງດີທີ່ສຸດ.

ຄຳກ່າວທີ່ຜ່ານມາຂ້າງຕົ້ນໄດ້ໃຫ້ຄວາມໝາຍສັ້ນໆກ່ຽວກັບອິດສະລາມ ແລະ ຄວາມໂດດເດັ່ນບາງປະການແລ້ວ,ເຊິ່ງນີ້ຄົງເປັນໂອກາດທີ່ດີທີ່ຈະກ່າວສະກົດວ່າ ອິດສະລາມນີ້ເປັນສາສະໜາທີ່ຊັດເຈນ ແລະ ຕໍ່ການເຮັດຄວາມເຂົ້າໃຈສຳລັບທຸກຄົນ,ເຊິ່ງເປັນສາສະໜາທີ່ເປີດປະຕູກວ້າງສະເໝີສຳລັບທຸກຄົນທີ່ຈະເຂົ້ານັບຖື.

ຖ້າຫາກວ່າການເວົ້າເຖິງບັນຍັດຕ່າງໆຂອງອິດສະລາມຫຼາກຫຼາຍນັ້ນເປັນສິ່ງທີ່ບໍ່ອາດຈະອະທິບາຍໄດ້ໂດຍຄຳເວົ້າສັ້ນໆ. ນະທີນີ້ຈຶ່ງຂໍອະທິບາຍເນື້ອຫາຫຼັກໆ ໜ້ອຍໜຶ່ງ ເພື່ອເພີ່ມຄວາມເຂົ້າໃຈໃຫ້ເຫັນພາບໄດ້ຊັດເຈນຫຼາຍຍິ່ງຂຶ້ນສຳລັບທ່ານທີ່ຕ້ອງການຈະຮູ້ເພີ່ມເຕີມ.

ທຸກໆຫຼັກການ ແລະ ຄວາມຮູ້ຂອງອິດສະລາມເປັນສິ່ງທີ່ສຳຄັນແຕ່ຫຼັກການບາງສ່ວນກໍມີຄວາມສຳຄັນຫຼາຍກວ່າອີກບາງສ່ວນ ແລະ ຕໍ່ໄປນີ້ເປັນຫຼັກການທີ່ສຳຄັນທີ່ສຸດ 6

ປະການທີ່ຈຳເປັນຕ້ອງເຊື່ອໝັ້ນດ້ວຍຫົວໃຈ ແລະ ອີກ 5 ປະການສຳລັບການປະຕິບັດ.

ຫຼັກການຄວາມເຊື່ອໝັ້ນທັງ 6 ປະການມີດັ່ງນີ້:

**1.ການສັດທາຕໍ່ອັລເລາະຫ໌ພຽງຜູ້ດຽວບໍ່ມີພາຄີໃດໆຄວບຄູ່ກັບພຣະອົງ**

ນັ້ນແມ່ນດ້ວຍການທີ່ຜູ້ໜຶ່ງສັດທາວ່າອັລເລາະຫ໌ພຽງຜູ້ດຽວເທົ່ານັ້ນແມ່ນຜູ້ສ້າງໂລກນີ້ແລະສິ່ງຕ່າງໆ ແລະ ພຣະອົງພຽງຜູ້ດຽວທີ່ບໍລິຫານຈັດການຕາມພຣະອົງປະສົງ,ເມື່ອເປັນແບບນີ້ແລ້ວ,ດັ່ງນັ້ນການເຄົາລົບບູຊາຈະບໍ່ເກີດຂຶ້ນກັບຜູ້ໃດເວັ້ນແຕ່ກັບອັລເລາະຫ໌ເທົ່ານັ້ນ, ເຊິ່ງການບູຊານີ້ຄືການປະຕິບັດຕາມຫຼັກການ ແລະ ເອກະລັກຕ່າງໆຂອງອິດສະລາມ , ພ້ອມກັບເຊື່ອໝັ້ນວ່າສາສະໜາອື່ນນອກເໜືອຈາກອິດສະລາມຍ່ອມເປັນສາສະໜາທີ່ໂມຂະທັງສິ້ນ.

**2.ການສັດທາຕໍ່ບັນດາມາລະອິກະ**

ມາລະອິກະແມ່ນສິ່ງຖືກສ້າງໜຶ່ງຂອງອັລເລາະຫ໌ທີ່ພວກເຮົາແນມບໍ່ເຫັນໃນໂລກນີ້,ພວກເຂົາດຳລົງການເຄົາລົບບູຊາຕໍ່ອັລເລາະຫ໌ແລະບໍ່ທໍລະຍົດພຣະອົງຢ່າງເດັດຂາດ, ເຊິ່ງອັລເລາະຫ໌ໄດ້ສັ່ງໃຊ້ມາລະອິກະໃຫ້ປະຕິບັດໜ້າທີ່ຕ່າງໆເທິງໂລກ

ນີ້ຢ່າງຫຼາກຫຼາຍເຊັ່ນ: ສັ່ງໃຫ້ຢິບຣິເປັນຜູ້ສົ່ງສານຈາກອັລ ເລາະຫ໌ສູ່ບັນດາສາສະນະທູດ ແລະ ມາລະອິກະມີກາອີເເມ່ນ ຜູ້ໄດ້ຮັບມອບໝາຍເລື່ອງນໍ້າຝົນ ແລະ ຍັງມີມາລະອິກະທີ່ເຮັດ ໜ້າທີ່ນັບການງານຂອງມະນຸດແລະຈົດບັນຊີໄວ້ເພື່ອການສອບ ສວນໃນວັນສິ້ນໂລກ ແລະ ອື່ນໆຫຼາກຫຼາຍ.

ຈໍາເປັນຕ້ອງເຊື່ອວ່າບັນດາມາລະອິກະເຫຼົ່ານີ້ເຮັດໜ້າທີ່ ຕ່າງໆຕາມທີ່ອັລເລາະຫ໌ໄດ້ມອບໝາຍ ແລະ ຈະບໍ່ປະຕິບັດ ສິ່ງໃດນອກຈາກອັລເລາະຫ໌ມອບໝາຍໄວ້ເທົ່ານັ້ນ.

### 3.ການສັດທາຕໍ່ບັນດາຄໍາພີ

ຄືການເຊື່ອໝັ້ນວ່າອັລເລາະຫ໌ໄດ້ປະທານຄໍາພີຕ່າງໆແກ່ປວງ ບ່າວຂອງພຣະອົງເຊິ່ງມັນເເມ່ນຄໍາດໍາລັດຂອງອັລເລາະຫ໌ ທີ່ລວມດ້ວຍສິ່ງທີ່ໃຫ້ຄວາມສຸກແກ່ມະນຸດ,ອະທິບາຍເຖິງສິ່ງ ທີ່ອັລເລາະຫ໌ຮັກແລະສິ່ງທີ່ພຣະອົງກຽດຊັງ,ເຊິ່ງຜູ້ທີ່ຖ່າຍທອດ ຄໍາພີເຫລົ່ານີ້ໃຫ້ແກ່ສາສະທູດກໍເເມ່ນຢິບຣີ,ຜູ້ເຊິ່ງເປັນຫົວໜ້າ ມາລະອິກະ ແລະ ນາບີແມ່ນຜູ້ຖ່າຍທອດແກ່ມະນຸດຊາດ.

ຄໍາພີທີ່ອັລເລາະຫ໌ໄດ້ປະທານລົງມາມີຫຼາກຫຼາຍ, ອັນໄດ້ແກ່: ຄໍາພີອັຕ- ເຕົາເຣາະຫ໌ເຊິ່ງຖືກປະທານແກ່ສາສະນະທູດມູຊາ, ຄໍາພີອັຊ-ຊະບູຣຖືກປະທານແກ່ສາສະນະທູດດາວຸດ,ຄໍາພີອັລ-

ອິນຢີລຖືກປະທານລົງມາໃກ້ແກ່ສາສະນະທູດອີຊາ ແລະ ຄໍາພີອັລກຸລະອານຖືກປະທານໃຫ້ແກ່ສາສະນະທູດມູຫັມຫມັດ ສໍລັລເລາະຫ໌ຮູອະໄລຮິວະສັລາມ.

ຈໍາເປັນຕ້ອງສັດທາວ່າອັລກຸລະອານແມ່ນຄໍາພີທີ່ໄດ້ຍົກເລີກຄໍາພີທັງຫຼາຍ,ມີຄວາມໝາຍວ່າອັລກຸລະອານພຽງເຫຼັ້ມດຽວເທົ່ານັ້ນທີ່ຈໍາເປັນຈະຕ້ອງຖືກປະຕິບັດຕາມຫຼັງຈາກທີ່ທ່ານສາສະນະທູດມູຫັມຫມັດ ສໍລັລເລາະຫ໌ຮູອະໄລຮິວະສັລລາມ, ໄດ້ຖືກແຕ່ງຕັ້ງຂຶ້ນມາ,ເຊິ່ງອັລກຸລະອານເຫຼັ້ມນີ້ໄດ້ຮວບຮວມຄວາມພິເສດຕ່າງໆໃນຄໍາພີກ່ອນໜ້າໄວ້ແລ້ວ ແລະ ໄດ້ເພີ່ມເຕີມຈາກເດີມທີ່ມີຢູ່ອີກຫຼາກຫຼາຍ.

ທ່ານຄວນຊາບວ່າ ອັລກຸລະອານແມ່ນຫຼັກຖານ ທີ່ສໍາຄັນທີ່ສຸດທີ່ບົ່ງບອກວ່າສາສະໜານີ້ແມ່ນສັດຈະທໍາ,ທີ່ຖືກປະທານມາຈາກພຣະຜູ້ເປັນເຈົ້າ,ແນ່ນອນວ່າອັລກຸລະອານຖືກປະທານລົງມາຫຼາຍກວ່າ 1400ປີແລ້ວຕັ້ງແຕ່ບັດນັ້ນຈົນເຖິງເວລານີ້ກໍຍັງບໍ່ມີການຄົ້ນພົບຂໍ້ຜິດພາດ ແລະ ຂໍ້ຂັດແຍ້ງໃນອັລກຸລະອານເລີຍຈົນເຖິງຂັ້ນຄໍາພຽງຄໍາດຽວກໍຕາມ.

ໃນຍຸກປັດຈຸບັນນີ້ໄດ້ມີການຄົ້ນພົບຄວາມຮູ້ທາງວິທະຍາການໃໝ່ໆ,ເຊິ່ງປາກົດວ່າສິ່ງຕ່າງໆເຫຼົ່ານີ້ໄດ້ມີລະບຸມາແລ້ວໃນອັລກຸລະອານຕັ້ງແຕ່ການເວລາອັນຍາວນານນັບພັນປີ.

ເຊັ່ນດຽວກັນ ຕັ້ງແຕ່ຍຸກການເວລາທີ່ຜ່ານມາຈົນເຖິງປັດຈຸບັນບໍ່ມີການເພີ່ມເສີມເຕີມແຕ່ງ,ຫຼືຕັດທອນໃດໆໃນອັລກຸລະອານເຊກເຊັ່ນທີ່ເຄີຍປາກົດໃນຄຳພີຕ່າງໆກ່ອນໜ້າດັ່ງອັລກຸລະອານທີ່ທ່ານພົບໃນດິນແດນອັນໄກພົ້ນ,ສຸດທາງທິດຕາເວັນອອກ,ກໍບໍ່ມີຄວາມແຕກຕ່າງກັບອັລກຸລະອານທີ່ທ່ານພົບຈາກດິນແດນອັນແສນໄກທາງທິດຕາເວັນຕົກເລີຍ,ຫາກວ່າທ່ານເຮັດການເປີດຊົມອັລກຸລະອານທີ່ມີອາຍຸນັບຮ້ອຍໆປີທ່ານກໍຈະບໍ່ພົບສິ່ງແຕກຕ່າງຈາກອັລກຸລະອານທີ່ຖືກຈັດພິມໃນປັດຈຸບັນແຕ່ຢ່າງໃດແຕ່ພຽງອັກສອນດຽວກໍຕາມ ແລະ ນີ້ແມ່ນການຮັກສາຈາກອັລເລາະຫ໌ຕໍ່ຄຳພີເຫຼັ້ມນີ້ແມ່ນຄຳພີຂອງສາສະໜາສຸດທ້າຍທີ່ມາປິດສາກສາສະໜາຕ່າງໆ.

ການເວົ້າເຖິງອັລກຸລະອານອາດຈະຕ້ອງໃຊ້ເວລາຍືດຍາວຢ່າງຫຼາຍເລີຍ,ເປັນການພຽງພໍສຳລັບທ່ານ,ທີ່ຈະຮັບຊາບວ່າບໍ່ມີຫຍັງຄືກັບອັລກຸລະອານຢ່າງສິ້ນເຊີງ,ທັງດ້ານຮູບແບບສຳນວນຜົນທີ່ລຶກຊຶ້ງຕໍ່ຈິດໃຈ ແລະ ເລື່ອງທີ່ກ່ຽວກັບສິ່ງລຶກລັບຕ່າງໆເປັນຕົ້ນ.

## 4.ການສັດທາຕໍ່ບັນດາສາສະນະທູດ

ຄືການທີ່ມະນຸດສັດທາວ່າອັລເລາະຫ໌ໄດ້ຄັດເລືອກມະນຸດຄົນໜຶ່ງທີ່ດີເລີດຈາກມວນມະນຸດທັງຫຼາຍ ແລະ ໄດ້ປະທານວະຍຸ(ວິວົນ)ແກ່ເຂົາ ເພື່ອເຮັດການເຜີຍແຜ່ສາສະໜາແກ່ມວນມະນຸດຊາດ

ບັນດາສາສະນະທູດມີຫຼາກຫຼາຍອາທິເຊັ່ນ: ນູດ,ອິບຣໍຮີມ,ດາວູດ,ສຸໄລມານ,ຢູຊຸບ,ມູຊາ ແລະ ອື່ນໆ ອີກຫຼາກຫຼາຍ.

ໃນຈຳນວນສາສະນະທູດເຫຼົ່ານັ້ນກໍແມ່ນອີຊາ (ເຢຊູ) ບຸດຂອງມັດຢັມ(ມາຣຽມ)ທີ່ຈະເປັນທີ່ເຮົາຈະຕ້ອງສັດທາວ່າທ່ານຄືສາສະນະທູດຂອງອັລເລາະຫ໌ແລະ ເປັນສາສະນະທູດທີ່ຍິ່ງໃຫຍ່.ດັ່ງນັ້ນ,ຈຶ່ງຈຳເປັນທີ່ຈະຕ້ອງສັດທາຕໍ່ການເປັນສາສະນະທູດຂອງທ່ານ,ຮັກ ແລະ ໃຫ້ກຽດຕໍ່ທ່ານ,ບຸກຄົນທີ່ຄຽດແຄ້ນແລະບໍ່ສັດທາຕໍ່ທ່ານ,ແນ່ນອນເຂົາບໍ່ມີຄວາມເປັນອິດສະລາມໃນຕົວເຂົາເລີຍ,ດັ່ງເຊັ່ນຈະຕ້ອງສັດທາເຊັ່ນກັນວ່າອັລເລາະຫ໌ໄດ້ສ້າງອີຊາໂດຍປາສະຈາກບິດາ,ໂດຍທີ່ພຣະອົງໄດ້ສົ່ງມາລະອິກະເພື່ອເປົ່າດວງວິນຍານສູ່ຄັນທ່ານນາງມັດຢັມ ແລະ ໄດ້ກຳເນີດສາສະນະທູດອີຊາຂຶ້ນມາ.

ມຸດສະລິມບໍ່ພົບຫົນທາງທີ່ຈະປະຕິເສດສິ່ງດັ່ງກ່າວນີ້ໄດ້,ເນື່ອງຈາກອັລເລາະຫ໌ແມ່ນຜູ້ທີ່ສາມາດບັນດາທຸກສິ່ງທີ່ພຣະອົງປະສົງ,ພຣະອົງໄດ້ສ້າງອີຊາມາໂດຍປາສະຈາກບິດາດັ່ງເຊັ່ນທີ່ພຣະອົງໄດ້ສ້າງສາສະນະທູດອາດັມໂດຍປາສະຈາກທັງບິດາ ແລະ ມານດາ

ດັ່ງນັ້ນ,ເຮົາໄດ້ຮັບຮູ້ແລ້ວວ່າອີຊາເປັນພຽງສາສະນະທູດຂອງອັລເລາະຫ໌ຫາໄດ້ເປັນພຣະເຈົ້າຫຼືບຸດຂອງພຣະເຈົ້າຢ່າງທີ່ໄດ້ຖືກກ່າວອ້າງນັ້ນ.

ສາສະນະທູດສົ່ງມາພ້ອມກັບການແຈ້ງຂ່າວເຖິງການປາກົດຂອງສາສະນະທູດຫຼັງຈາກທ່ານນັ້ນແມ່ນ ມູຫັມຫມັດບຸດອັບດຸນເລາະຫ໌ສໍລັລເລາະຫ໌ຮູອະໄລຮິວະສັລລາມແມ່ນສາສະນະທູດທ່ານສຸດທ້າຍແລະຈະບໍ່ມີສາສະນະທູດຫຼັງຈາກທ່ານອີກ.

ສາສະນະທູດ ມູຫັມຫມັດ ບຸດອັບດຸນເລາະຫ໌ສໍລັລເລາະຫ໌ຮູອະໄລຮິວະສັລລາມຜູ້ນີ້ແມ່ນຜູ້ທີ່ອັລເລາະຫ໌ໄດ້ສົ່ງທ່ານມາເມື່ອ 1400 ປີກ່ອນ,ເປັນບຸກຄົນທີ່ມະນຸດຊາດທັງໝົດທີ່ມີຊີວິດຕັ້ງແຕ່ວັນທີທ່ານຖືກແຕ່ງຕັ້ງຈົນເຖິງວັນສິ້ນໂລກຈັກ

ຕ້ອງສັດທາຕໍ່ທ່ານ ແລະ ຕໍ່ບົດບັນຍັດທີ່ທ່ານນຳມາເຊື່ອຟັງສິ່ງທີ່ທ່ານໃຊ້ ແລະ ລະເວັ້ນສິ່ງທີ່ທ່ານຫ້າມ.

ບັນດາຜູ້ທີ່ສຶກສາຊີວະປະຫວັດຂອງທ່ານສາສະນະທູດມູຫັມຫມັດ ສໍລັລເລາະຫ໌ຮູອະໄລຮິວະສັລລາມ ໄດ້ກ່າວເປັນສຽງດຽວກັນວ່າ ທ່ານແມ່ນບຸກຄົນທີ່ມີຄຸນສົມບັດອັນຫຍິ່ງໃຫຍ່ ເຊິ່ງອັລເລາະຫ໌ໄດ້ມອບໝາຍຄວາມພິເສດແກ່ທ່ານ,ທີ່ບໍ່ເຄີຍມີໃນຜູ້ໃດເລີຍທັງກ່ອນໜ້າ ແລະ ມາທີຫຼັງ

ການສຶກສາສິ່ງທີ່ຖືກຂຽນກ່ຽວກັບຊີວະປະຫວັດຂອງທ່ານພຽງເລັກນ້ອຍ,ກໍພໍທີ່ບົ່ງບອກເຖິງຄວາມສັດຈິງໃນສິ່ງທີ່ຂ້າພະເຈົ້າກ່າວໄດ້ແລ້ວ.

ເຊັ່ນດຽວກັນນັ້ນ,ອັລເລາະຫ໌ໄດ້ມອບໝາຍຫຼັກຖານຕ່າງໆທີ່ບົ່ງບອກເຖິງການເປັນສາສະນະທູດຂອງທ່ານ,ເປັນຫຼັກຖານທີ່ຈະພໍເຮັດໃຫ້ການສົງໄສໃນຕົວທ່ານເປັນສິ່ງທີ່ເປັນໄປບໍ່ໄດ້ອີກແລ້ວໃນທາງປັນຍາຜູ້ໃດກໍຕາມທີ່ປະຕິເສດການສັດທາຕໍ່ທ່ານທັງໆທີ່ອັລເລາະຫ໌ໄດ້ໃຫ້ຫຼັກຖານການຢັ້ງຢືນຕ່າງໆມາແລ້ວ,ແນ່ນອນ,ເຂົາຜູ້ນັ້ນກໍຈະບໍ່ສາມາດຢັ້ງຢືນການເປັນສາສະນະທູດໃຫ້ແກ່ສາສະນະທູດໃຫ້ແກ່ສາສະນະທູດຜູ້ໃດໄດ້ອີກເລີຍ.

## 5.ການສັດທາຕໍ່ວັນສິ້ນໂລກ

ແມ່ນການເຊື່ອໝັ້ນຢ່າງໜັກແໜ້ນວ່າຫຼັງຈາກຊີວິດໃນໂລກນີ້ຈະມີອີກຊີວິດໜຶ່ງທີ່ນິລັນດອນ ແລະ ສົມບູນກວ່າ,ເຊິ່ງຈະມີການຕອບແທນມີຄວາມຜາສຸກ ແລະ ການລົງໂທດ.

ຄວາມຜາສຸກໝາຍເຖິງ ການຈະໄດ້ຢູ່ໃນສະຖານພຳນັກທີ່ຖືກເອີ້ນວ່າ"ສະຫວັນ"ສ່ວນການລົງໂທດກໍຈະຢູ່ໃນສະຖານພຳນັກທີ່ຖືກເອີ້ນວ່າ"ນະລົກ"(ຢູະຮັນນັມ)

ຜູ້ທີ່ສັດທາ ແລະ ປະຕິບັດຕາມຄຳສອນຂອງອິດສະລາມ,ບັ້ນປາຍຂອງເຂົາແມ່ນສະຫວັນ,ເປັນສະຖານທີ່ທີ່ມີຄວາມໂປດປານ,ຄວາມຜາສຸກທຸກປະເພດ,ທີ່ປັນຫາບໍ່ມີສາມາດຢັ່ງເຖິງ ແລະ ຄວາມສຸກໃນໂລກນີ້ບໍ່ສາມາດທຽບຄຽງຄວາມສຸກໃນໂລກໜ້າໄດ້ເລີຍ,ບຸກຄົນໃດທີ່ໄດ້ເຂົ້າສະຫວັນເຂົາຈະພຳນັກ ແລະ ມີຄວາມສຸກຢ່າງບໍ່ມີສິ້ນສຸດເພາະຈະບໍ່ມີການຕາຍເກີດຂຶ້ນອີກ.

ໃນທາງກົງກັນຂ້າມ,ຜູ້ທີ່ບໍ່ສັດທາ ແລະ ຝ່າຝືນຫຼັກການອິດສະລາມ,ແນ່ນອນບັ້ນປາຍຂອງເຂົາຈະພຳນັກໃນນະລົກຢູະຮັນນັມ,ທີ່ມີໄຟລຸກໂຊນ ແລະ ພົບກັບປະເພດການທໍລະມານທີ່ປັນຍາບໍ່ສາມາດຢັ່ງເຖິງ ເປວໄຟແລະການ

ລົງໂທດເທິງໂລກນີ້ບໍ່ສາມາດທຽບຄຽງໃນວັນນັ້ນໄດ້ເລີຍແມ້ແຕ່ນ້ອຍ.

ການສັດທາວ່າຈະມີການສອບສວນ,ສະຫວັນ ແລະ ນະລົກຫຼັງຈາກຊີວິດໃນໂລກດຸນຍາເປັນສິ່ງທີ່ປັນຍາສາມາດຮັບໄດ້,ເພາະເປັນໄປບໍ່ໄດ້ທີ່ຊີວິດອັນພຽບພ້ອມໃນໂລກນີ້ຈະເກີດຂຶ້ນແລ້ວກໍສູນສະຫຼາຍໄປດື້ໆ.ຫຼັງຈາກນັ້ນ,ເປັນເລື່ອງທີ່ໄຮ້ສາລະ ແລະ ອັລເລາະຫ໌ພຣະຜູ້ເປັນເຈົ້າຂອງເຮົານັ້ນຊົງບໍລິສຸດຈາກການເຮັດເລື່ອງເຊັ່ນນີ້.

### 6.ການສັດທາຕໍ່ການກົດສະພາວະການ

ແມ່ນການເຊື່ອໝັ້ນວ່າທຸກສິ່ງທີ່ເກີດຂຶ້ນເທິງໂລກໃບ,ບໍ່ວ່າຈະເປັນການເຄື່ອງໄຫວ,ການຢຸດນີ້ງ,ລ້ວນເປັນການຮັບຮູ້ ແລະ ປະສົງຂອງອັລເລາະຫ໌ທັງສິ້ນ,ຈະບໍ່ມີສິ່ງໃດເກີດຂຶ້ນ, ເວັ້ນແຕ່ມັນຈະເປັນສິ່ງທີ່ພຣະອົງປະສົງ ແລະ ສິ່ງທີ່ພຣະບໍ່ປະສົງຈະບໍ່ເກີດຂຶ້ນຢ່າງເດັດຂາດ,ເຊິ່ງອັລເລາະຫ໌ໄດ້ບັນທຶກທຸກສິ່ງຈະເກີດຂຶ້ນໄວ້ໃນສະໝຸດບັນທຶກອັນຫຍິ່ງໃຫຍ່ທີ່ເອີ້ນວ່າ (ອັລ-ເລົາຫ໌ ອັລ-ມະຫ໌ຟູຊ)ກະດານບັນທຶກທີ່ຖືກຮັກສາ.

ການສັດທາໃນເລື່ອງນີ້ຍັງໝາຍລວມເຖິງການສັດທາວ່າອັລເລາະຫ໌ຊົງສ້າງທຸກສິ່ງທຸກຢ່າງອີກດ້ວຍ.

ສ່ວນຫຼັກການປະຕິບັດທີ່ສຳຄັນທັງ 5 ປະການໃນອິດສະລາມ ໄດ້ແກ່:

**1.ການທີ່ບຸກຄົນໜຶ່ງກ່າວປະໂຫຍດທີ່ເປັນກຸນແຈເພື່ອເຂົ້າສູ່ອິດສະລາມ**,ມັນແມ່ນສັນຍາລະຫວ່າງມະນຸດກັບພຣະຜູ້ອະພິບານຂອງເຂົາເພື່ອຢັ້ງຢືນວ່າເຂົາໄດ້ຢືນຢັດຢູ່ເທິງສາສະໜານີ້ ເຊິ່ງປະໂຫຍດນີ້ໄດ້ແກ່:

أشهد ألا إله إلّا الله، وأشهد أن محمداً رسول الله

**ອັຊຮະດຸ ອັລລາ ອິລາຮະ ອິລລັລ ເລາະຫ໌**

**ວະ ອັຊຫະດຸ ອັນນະ ມຸຫັມມະດັຣ ເຣາະຊູລຸລ ເລາະຫ໌**

ຄວາມວ່າ: ຂ້າພະເຈົ້າຂໍປະຕິຍານວ່າບໍ່ມີພຣະເຈົ້າອື່ນໃດນອກຈາກອັລເລາະຫ໌ແລະ ຂ້ອຍຂໍປະຕິຍານວ່າ ມູຫັມຫມັດຄືສາສະນະທູດຂອງອັລເລາະຫ໌.

ມີໃຈຄວາມວ່າ ເປັນການຢືນຢັນ,ຍອມຮັບແລະຍຶດໝັ້ນທີ່ຈະເຄົາລົບພັກດີຕໍ່ອັລເລາະຫ໌ພຽງຜູ້ດຽວ ແລະ ການຍອມຮັບວ່າອິດສະລາມແມ່ນສາສະໜາທີ່ທ່ຽງແທ້ ແລະ ພຣະເຈົ້າທີ່ມີສິດໃນການບູຊາອື່ນນອກຈາກພຣະອົງເປັນໂມຂະທັງສິ້ນ,ລວມ

ທັງຍອມຮັບວ່າສາສະໜາອື່ນນອກເໜືອຈາກອິດສະລາມລ້ວນ ເປັນໂມຂະເຊັ່ນດຽວກັນ.

ສ່ວນການຍອມຮັບວ່າມູຫັມຫມັດ ເປັນສາສະນະທູດ ຂອງອັລເລາະຫ໌ແມ່ນຜູ້ທີ່ເປັນມຸດສະລິມຈະຕ້ອງປະຕິບັດຕາມ ແລະ ເຊື່ອຟັງໃນທຸກສິ່ງທີ່ທ່ານນຳມາ.

**2.ການລະໝາດ**

ຄືຄຳກ່າວ ອິຣິຍາບົດ ແລະ ບົດຂໍພອນຕ່າງໆ ທີ່ຖືກ ປະຕິບັດໃນຮູບແບບສະເພາະ,ຫ້າຄັ້ງໃນທຸກໆມື້ ເຊິ່ງການລະ ໝາດແຕ່ລະຄັ້ງ

ບໍ່ໄດ້ໃຊ້ເວລາຫຼາຍແຕ່ແບບຢ່າງໃດເລີຍ,ມັນໃຊ້ເວລາປະມານ ພຽງ 5 ນາທີເທົ່ານັ້ນ.

ການລະໝາດແມ່ນການຕິດຕໍ່ລະຫວ່າງບ່າວ ແລະ ພຣະຜູ້ອະທິບານຂອງເຂົາ,ມຸດສະລິມຈະເກີດຄວາມຮູ້ສຶກເຊື່ອ ໝັ້ນ,ສະຫງົບ,ສຸຂຸມ ແລະ ຜ່ອນຄາຍທາງດ້ານຈິດວິນຍານ ຈາກການລະໝາດ.

**3.ການຈ່າຍຊະກາດ**

ຄືການທີ່ມຸດສະລິມຜູ້ທີ່ມີຊັບສິນຈ່າຍຈຳນວນໜຶ່ງຈາກຊັບຂອງເຂົາແກ່ຜູ້ຂາດແຄນ, ໃນປະລິມານ 2,5% ຂອງຈຳນວນຊັບເທົ່ານັ້ນ, ເປັນຈຳນວນບໍ່ຫຼາຍ ແຕ່ມັນຈະເກີດຜົນໃນສັງຄົມມຸດສະລິມໃຫ້ມີການຊ່ວຍເຫຼືອ,ມີຄວາມເມດຕາ ແລະຄວາມຜູກພັນກັນສ້າງຄວາມຮັກໃຜ ແລະ ການເປັນພີ່ນ້ອງເຊິ່ງກັນ ແລະ ກັນ.

ຂ້າພະເຈົ້າຂໍເນັ້ນຢ້ຳອີກວ່າ ການຈ່າຍຊະກາດນີ້ເປັນໜ້າທີ່ຈຳເປັນສະເພາະຄົນລວຍ,ສ່ວນຄົນທຸກຍາກນັ້ນບໍ່ແມ່ນໜ້າທີ່ສິ່ງຈຳເປັນສຳລັບພວກເຂົາ.

**4.ການຖືສິນອົດ**

ໝາຍເຖິງ ການທີ່ບຸກຄົນລະເວັ້ນອາຫານ ແລະເຄື່ອງດື່ມລວມທັງການຫຼັບນອນກັບພັນລະຍາ,ໃນຊ່ວງເວລາເດືອນເຣາະມະດອນຂອງທຸກໆປີລະຫວ່າງເວລາດວງອາທິດຂຶ້ນຈົນເຖິງລັບຂອບຟ້າ.

ການຖືສິນອົດຖືກກຳນົດເປັນຂໍ້ຍົກເວັ້ນແກ່ຜູ້ປ່ວຍ ແລະ ຜູ້ທີ່ມີຂໍ້ຍົກເວັ້ນອື່ນໆພວກເຂົາສາມາດກິນ,ດື່ມ ໃນຕອນກາງເວັນຂອງເຣາະມະດອນໄດ້ ແລະ ຖືສິນອົດຊົດໃຊ້ໃນ

ເວລາຕໍ່ມາຕະຫຼອດທັງປີຫຼັງຈາກທີ່ຈະໝົດພາວະຄວາມຈຳເປັນແລ້ວຕາມຈຳນວນວັນທີ່ຂາດການຖືສິນອົດໃນເຮາະມະດອນ.

ການຖືສິນອົດຍັງມີປະໂຫຍດຕໍ່ສຸຂະພາບຮ່າງກາຍ ແລະ ຈິດໃຈເຊັ່ນ: ການພັກລະບົບຍ່ອຍອາຫານໃນຮ່າງກາຍໃນບາງເວລາ,ການທີ່ມຸດສະລິມມີຄວາມຮູ້ສຶກສູງສົ່ງທາງຈິດວິນຍານ ແລະ ມີມາລະຍາດທີ່ສົມດຸນ ແລະ ການທີ່ມຸດສະລິມຮູ້ສຶກ ແລະ ຮູ້ເຖິງຄວາມລຳບາກຂອງພີ່ນ້ອງຂອງເຂົາທີ່ຍາກຈົນ,ບໍ່ມີອາຫານປະທັງຊີວິດພຽງພໍຕະຫຼອດທັງປີ, ເຂົາຈຶ່ງເກີດຄວາມຖ່ອມຕົນ ແລະ ຮີບເລັ່ງໃນການຊ່ວຍເຫຼືອພີ່ນ້ອງຂອງເຂົາທີ່ຂາດແຄນເປັນຕົ້ນ.

**5.ການປະກອບພິທີຫັຈ**

ໝາຍເຖິງຮູບແບບຂອງການປະກອບສາສະນະກິດຕ່າງໆເປັນການສະເພາະນະເມືອງມັກກະ,ເຊິ່ງເປັນຂໍ້ບັງຄັບພຽງຄັ້ງດຽວໃນຊີວິດມຸດສະລິມ,ຜູ້ທີ່ມີຄວາມສາມາດທາງດ້ານຊັບ ແລະ ສຸຂະພາບຮ່າງກາຍ,ສ່ວນຜູ້ທີ່ບໍ່ມີຄວາມສາມາດດັ່ງກ່າວກໍຖືວ່າອະນຸໂລມໃຫ້ລະເວັ້ນໄດ້.

ການປະກອບພິທີຫັຈມີປະໂຫຍດຫຼາກຫຼາຍເຊັ່ນ: ການລວມຕົວຂອງມຸດສະລິມທົ່ວທຸກມຸມໂລກໃນສະຖານທີ່ດຽວກັນ,ເພື່ອທຳຄວາມຮູ້ຈັກ ແລະ ສ້າງຄວາມຮັກເຊິ່ງກັນ ແລະ ກັນ ແລະ ຍັງເປັນການຝຶກຝົນຄວາມອົດທົນ,ມາລະຍາດ ສະແຫວງຫາເພີ່ມພູນຄວາມສັດທາ ແລະ ຄວາມບໍລິສຸດທາງຈິດວິນຍານ,ຕະຫຼອດໄລຍະເວລາການປະກອບພິທີຫັຈ

## ຫຼັງຈາກນີ້ຕໍ່ໄປ

ຫວັງວ່າຄຳເວົ້າທີ່ຜ່ານມາຈະເປັນການພຽງພໍສຳລັບທ່ານໃນການອະທິບາຍເຖິງຮູບລັກສະນະຂອງອິດສະລາມຢ່າງສະຫຼຸບ

ຂ້າພະເຈົ້າຂໍຮຽກຮ້ອງທ່ານຜູ້ທີ່ຍັງບໍ່ເປັນມຸດສະລິມທັງຫຼາຍໄດ້ກະລຸນາຟັງຄວາມຮຽກຮ້ອງຈາກຫົວໃຈທີ່ສັດຈິງ ແລະ ເປັນຫ່ວງທ່ານທັງຫຼາຍວ່າ: ຈົ່ງຄຸ່ນຄິດເຖິດກ່ອນທີ່ຄວາມຕາຍຈະມາຫາທ່ານຢ່າງກະທັນຫັນ ແລະ ທ່ານກໍເສຍຊີວິດໃນສະພາບທີ່ທ່ານຍັງບໍ່ເຂົ້າຮັບອິດສະລາມເຊິ່ງແນ່ນອນມັນຈະເປັນການຂາດທຸນທີ່ໃຫຍ່ຫຼວງ.

ທ່ານຮູ້ຫຼືບໍ່ ແມ່ນຫຍັງຄືຄວາມໝາຍຂອງການເສຍຊີວິດຂອງທ່ານໃນສະພາບທີ່ຍັງບໍ່ເຂົ້າຮັບອິດສະລາມ?

ມັນໝາຍເຖິງ ການທີ່ທ່ານຈະເຂົ້ານະລົກຢູ່ະຮັນນັມ ແລະ ທ່ານຈະຖືກລົງໂທດໃນນັ້ນຢ່າງນິລັນດອນການ,ຈະບໍ່ມີທີ່ສິ້ນສຸດ,ນີ້ແມ່ນສັນຍານຂອງອັລເລາະຫ໌ຕໍ່ຜູ້ທີ່ເສຍຊີວິດໃນສະພາບທີ່ຍັງບໍ່ເປັນມຸດສະລິມ ແລະ ເປັນຫຍັງທ່ານຍັງສ່ຽງລ່າຊ້າກັບປະເດັນທີ່ອັນຕະລາຍ ແລະ ສຳຄັນເຊັ່ນນີ້ລ່ະ?

ຂ້າພະເຈົ້າຈະຖາມທ່ານໜຶ່ງຄຳຖາມ ກະລຸນາຕອບຕາມຄວາມເປັນຈິງ ທ່ານຈະຂາດທຸນຫຍັງເມື່ອທ່ານເຂົ້າຮັບນັບຖືອິດສະລາມ? ແມ່ນ ແມ່ນຫຍັງຄືສິ່ງທີ່ທ່ານຈະເສຍມັນໄປເມື່ອທ່ານເຂົ້າຮັບອິດສະລາມ?

ເມື່ອທ່ານເຂົ້າຮັບອິດສະລາມ ທ່ານກໍຈະໃຊ້ຊີວິດຢ່າງປົກກະຕິ ແຕ່ຈະມີຫຍັງເພີ່ມຫຼາຍກວ່າເດີມ ນັ້ນແມ່ນຄວາມບໍລິສຸດ,ຄວາມສຸກ,ການມີ

ລະບົບລະບຽບໃນຊີວິດ ແລະ ອື່ນໆ ແລະ ຫຼັງຈາກຄວາມຕາຍ,ຄວາມສຸກທີ່ຫຍິ່ງໃຫຍ່ ແລະ ຖາວອນກໍກຳລັງລໍຖ້າທ່ານຢູ່.

ແລະ ເມື່ອທ່ານໝັ້ນໃຈວ່າອິດສະລາມນັ້ນຖືກຕ້ອງ ແຕ່ທ່ານຢ້ານວ່າການຮັບອິດສະລາມຈະຂັດຂວາງທ່ານຈາກຄວາມເພີດເພີນກັບການລະຫລິ້ນ ແລະ ຄວາມບັນເທີງທີ່ທ່ານ

ຂາດມັນບໍ່ໄດ້, ກໍຂໍໃຫ້ປຽບທຽບລະຫວ່າງຄວາມມ່ວນຊື່ນ, ເພີດເພີນອັນແສນສັ້ນ ແລະ ມີຂີດຈຳກັດນີ້, ກັບຄວາມໂປດປານ,ຄວາມສຸກ ແລະ ຄວາມມ່ວນຊື່ນອັນຖາວອນ,ແມ່ນຫຍັງສົມຄວນທີ່ທ່ານຈະເລືອກມັນ?

ທ່ານສາມາດເຂົ້າຮັບອິດສະລາມ ແລະ ພະຍາຍາມລະຖິ້ມຂໍ້ຫ້າມທີ່ເຄີຍເຮັດມາຢ່າງເປັນຂັ້ນເປັນຕອນ ແລະ ເມື່ອທ່ານວິງວອນຂໍຕໍ່ອັລເລາະຫ໌ດ້ວຍຄວາມສັດຈິງ ແນ່ນອນພຣະອົງກໍຈະຊ່ວຍທ່ານ.

ຢ່າງໃດກໍຕາມ ຖ້າທ່ານຍັງບໍ່ສາມາດລະຖິ້ມມັນໄດ້ຂະນະທີ່ທ່ານເຂົ້າຮັບອິດສະລາມແລ້ວ,ສະພາບທີ່ຮ້າຍທີ່ສຸດກໍແມ່ນທ່ານເປັນມຸດສະລິມທີ່ເຮັດບາບ ແລະ ເປັນຜູ້ບົກພ່ອງເຊິ່ງສະພາບທີ່ຮ້າຍທີ່ສຸດນີ້ກໍຍັງດີກວ່າການທີ່ທ່ານບໍ່ໄດ້ເປັນຜູ້ສັດທາ.

ຫາກທ່ານຄິດວ່າສຸດທ້າຍນີ້ ການເຂົ້າຮັບອິດສະລາມຈະເຮັດໃຫ້ທ່ານມີບຸກຄະລິກພາບທີ່ຫຼູດລົງ ແລະ ທ່ານຍັງບໍ່ສາມາດພໍທີ່ຈະຕັດສິນໃຈ ຫຼື ທ່ານອາດຈະຢ້ານຄຳເວົ້າຂອງຜູ້ຄົນ ຫຼື ຄຳເຢາະເຢີ້ຍຈາກພວກເຂົາ,ໂປດຊາບເຖີດວ່າ ສິ່ງດັ່ງກ່າວນັ້ນເປັນພຽງຂໍ້ລະແວງທີ່ບໍ່ເປັນຄວາມຈິງ ທ່ານບໍ່ແມ່ນ

ບຸກຄົນເເລກທີ່ເຂົ້າຮັບອິດສະລາມ,ແຕ່ຜູ້ຄົນຫຼາກຫຼາຍນອກ ເໜືອຈາກທ່ານທີ່ໄດ້ຕັດສິນໃຈສູ່ອິດສະລາມ ໂດຍທີ່ການໃຊ້ ຊີວິດຂອງພວກເຂົາບໍ່ພັງທະລາຍ,ບໍ່ມີການຂາດທຶນໃດໆ ແລະ ພວກເຂົາບໍ່ເສຍໃຈເລີຍທີ່ເລືອກອິດສະລາມ ເເລະ ມັນຄຸ້ມ ເເລ້ວຫຼືບໍ່ທ່ານຈະເເລກຄວາມສຸກຂອງທ່ານເທິງໂລກໃບນີ້ ແລະ ໂລກໜ້າກັບພຽງຄຳເວົ້າຄຳດູຖູກຂອງຄົນພຽງບໍ່ເທົ່າໃດ ຄົນ?

ແລະ ນີ້ເປັນປະເດັນທີ່ສຳຄັນຫຍິ່ງ ທີ່ທ່ານຈະຕ້ອງຢຸດ ໄຕ່ຄວນ ແລະ ພິຈາລະນາໃຫ້ມັນດີ.

ຂໍຝາກຄຳເວົ້າສຸດທ້າຍຂອງຂ້າພະເຈົ້າແດ່ທ່ານວ່າ: **ຈົ່ງລະວັງຢ່າໃຫ້ໂຕເອງເປັນຜູ້ຂາດທຸນ!!!.**

ສຸດທ້າຍ ຂ້າພະເຈົ້າຂໍວິງວອນຕໍ່ອັລເລາະຫ໌ໄດ້ຂໍ ຄວາມກະລຸນານຳທາງໃກ້ແດ່ທ່ານສູ່ສັດຈະທຳດ້ວຍເຖີດ.

ດ້ວຍຄວາມປາດທະໜາໃຫ້ທ່ານໄດ້ພົບກັບສິ່ງດີໆ ຈາກຜູ້ຂຽນ

**ດຣ.ສໍລິດ ບິນ ອັບດຸນອະຊີ.**